International Labour Organization

ILO/Korea Partnership Programme

ILO brief

# ປະກັນສັງຄົມສຳລັບຜູ້ປະກອບອາຊີບອິດສະຫຼະ

ມັງກອນ 2023

**ມີຫຼາຍປະເທດເຊັ່ນ: ອາເຈນຕິນາ, ບຣາຊິນ, ຄາໂບ ເວເດ, ຈໍແດນ, ເຄນຢາ, ເມັກຊິໂກ, ຟີລິບປິນ, ແລະ ອູຣູໄກວ, ໄດ້ຫັນເອົາຜູ້ປະກອບອາຊີບອິດສະຫຼະເຂົ້າໃນລະບົບການປົກປ້ອງສັງຄົມທົ່ວໄປຂອງພວກເຂົາ.**

ໂຄງການ Microemprendedor Individual (MEI) ໃນປະເທດບຣາຊິນໄດ້ຊ່ວຍກຳນົດປະເພດຜູ້ປະກອບການຈຸລະພາກທີ່ປະກອບອາຊີບອິດສະຫຼະຂຶ້ນໃນປີ 2008 ໂດຍຜ່ານກົດໝາຍສະບັບເລກທີ 128. ກົດໝາຍສະບັບນີ້ກຳນົດຜູ້ປະກອບການຈລະພາກເປັນບຸກຄົນທີ່ມີລາຍໄດ້ສູງສຸດ 81,000 ບູາຊິວຣຽວຕໍ່ປີ (ປະມານ 20,800 ໂດລາສະຫະລັດ) ເຊິ່ງບໍ່ໄດ້ເປັນຄູ່ຮ່ວມງານ ຫຼື ເປັນຜູ້ຖືຫຸ້ນກັບບໍລິສັດອື່ນ ແລະ ມີພະນັກງານບໍ່ເກີນຫນຶ່ງຄົນ. ນອກຈາກນັ້ນ, ເພື່ອຫຼີກລ້ຽງການໃຊ້ອຳນາດໃນທາງທີ່ບໍ່ຖືກຕ້ອງ, ໄດ້ມີການຍົກເວັ້ນບາງຂະແຫນງການເຊັ່ນຜູ້ປະກອບການທີ່ດຳເນີນກິດຈະການກ່ຽວກັບປັນຍາ (ເຊັ່ນ: ນັກບັນຊີ, ທ່ານຫມໍ, ທະນາຍຄວາມ, ແລະ ອື່ນໆ). ກົດໝາຍສະບັບນີ້ຊ່ວຍເຮັດໃຫ້ການລົງທະບຽນປະກັນສັງຄົມ ແລະ ການຈ່າຍເງິນສົມທົບງ່າຍຂຶ້ນໂດຍໂຮມເອົາລະບົບການຈ່າຍອາກອນ ແລະ ເງິນສົມທົບເຂົ້າເປັນລະບົບດຽວ ເຊັ່ນ ລະບົບ “monotax”. ໃນຂະນະທີ່ກົດຫມາຍນີ້ເປັນສ່ວນຫນຶ່ງຂອງກົດຫມາຍລະດັບຊາດເລກທີ່ 9317, ທີ່ເວົ້າເຖິງຈຸລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ, ມີການຄາດຄະເນວ່າອັດຕາການຈ່າຍສົມທົບຂອງຜູ້ປະກອບການຈຸລະພາກຕ່ຳກວ່າພາກປົກກະຕິ. ແຜນງານ MEI ໄດ້ປະກອບສ່ວນຕໍ່ການຂະຫຍາຍເຂດປົກຄຸມຂອງປະກັນສັງຄົມສູ່ແຮງງານຜູ້ປະກອບອາຊີບອິດສະຫຼະເພີ່ມຂຶ້ນພຽງແຕ່ 10 ເປີເຊັນໃນລະຫວ່າງປີ 2009-2015, ພ້ອມທັງເພີ່ມຈຳນວນວິສາຫະກິດຂະໜາດໜ້ອຍ ແລະ ກາງ (SMEs) ທີ່ຂຶ້ນທະບຽນຈາກປະມານ 3 ລ້ານຄົນໃນປີ 2009 ເປັນ 5 ລ້ານໃນປີ 2018.

ປະເທດໂຄສຕາຣິກາ ແລະ ຄາໂບເວເດ ໄດ້ປະຕິຮູບກົດຫມາຍຂອງພວກເຂົາເພື່ອກຳນົດການມີສ່ວນຮ່ວມຂອງແຮງງານປະກອບອິດສະຫຼະເຂົ້າໃນລະບົບອຸດໜູນບຳນານ ແລະ / ຫຼື ປະກັນສຸຂະພາບ. ເພື່ອຮັບປະກັນການຂະຫຍາຍຕົວຂອງເຂດປົກຄຸມຂອງກອງທຶນ, ໄດ້ຫຼຸດລະດັບອັດຕາເງິນສົມທົບ ແລະ ດັດປັບເງິນອຸດໜູນໃຫ້ສອດຄ່ອງກັບເງິນເດືອນທີ່ຜູ້ອອກແຮງງານໄດ້ຮັບ. ມາດຕະການເຫຼົ່ານີ້ໄດ້ພິສູດໃຫ້ເຫັນວ່າປະສົບຜົນສຳເລັດ: ໃນປະເທດຄາໂບເວເດ, ອັດຕາການປົກຄຸມເພີ່ມຂຶ້ນຈາກ 0% ເປັນ 9% ພາຍໃນ 1 ປີຂອງການຈັດຕັ້ງປະຕິບັດ. ຂໍ້ຕົກລົງການຂຶ້ນທະບຽນລວມໝູ່ແມ່ນອີກກົນໄກໜຶ່ງທີ່ເປັນປະໂຫຍດເພື່ອອຳນວຍຄວາມສະດວກໃຫ້ແກ່ການລົງທະບຽນຂອງແຮງງານປະກອບອາຊີບອິດສະຫຼະ.

ອົງການຕາງໜ້າຜູ້ອອກແຮງງານປະກອບອາຊີບອິດສະຫຼະ (ເຊັ່ນ:ສະຫະພັນກຳມະບານ, ສະຫະກອນ, ຫຼື ສະມາຄົມຜູ້ຜະລິດ) ສາມາດເປັນສື່ກາງລະຫວ່າງຜູ້ອອກແຮງງານ ແລະ ສະຖາບັນປະກັນສັງຄົມ. ຕົວຢ່າງຂອງຂໍ້ຕົກລົງລວມໝູ່ດັ່ງກ່າວແມ່ນພົບເຫັນຢູ່ໃນເອກວາດໍ, ໂຄສຕາຣິກາ, ແລະ ສາທາລະນະລັດໂດມິນິກັນ. ໄລຍະຕໍ່ມາ, ສະຫະພັນກຳມະບານທີ່ສະຫນັບສະຫນູນສະມາຄົມ AMUSSOL ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2005 ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງປະກັນສັງຄົມສຳລັບແຮງງານປະກອບອາຊີບອິດສະຫຼະ ແລະ ແຮງງານປະເພດອື່ນໆທີ່ມີຄວາມສ່ຽງ. AMUSSOL ເຮັດຫນ້າທີ່ເປັນສື່ກາງລະຫວ່າງສະຖາບັນປະກັນສັງຄົມ ແລະ ຜູ້ອອກແຮງງານໃນເສດຖະກິດນອກລະບົບດ້ວຍການລວບລວມເງິນສົມທົບປະກັນສັງຄົມຈາກສະມາຊິກຂອງຕົນ ແລະ ໂອນໃຫ້ສະຖາບັນປະກັນສັງຄົມ. AMUSSOL ໄດ້ຄຸ້ມຄອງແຮງງານ 60,000 ຄົນຈົນເຖິງປະຈຸບັນ. ຄວາມຈິງທີ່ວ່າຜູ້ອອກແຮງງານພ້ອມທີ່ຈະຈ່າຍຄ່າທຳນຽມເພີ່ມ 1% ສຳລັບຄ່າໃຊ້ຈ່າຍໃນການດຳເນີນງານ AMUSSOL ນອກຈາກເງິນສົມທົບສະແດງໃຫ້ເຫັນວ່າພວກເຂົາເຫັນຄວາມສຳຄັນຂອງປະກັນສັງຄົມຫຼາຍ.



ອິດສະຫຼະ (ເຊັ່ນ: ສະຫະ ພັນກຳມະບານ, ສະຫະກອນ, ຫຼືສະມາຄົມຜູ້ຜະລິດ) ສາມາດເປັນສື່ກາງລະຫວ່າງຜູ້ອອກແຮງງານ ແລະ ສະຖາບັນປະກັນສັງຄົມ. ຕົວຢ່າງຂອງຂໍ້ຕົກລົງລວມໝູ່ດັ່ງກ່າວແມ່ນພົບເຫັນຢູ່ໃນເອກວາດໍ,ໂຄສຕາຣິກາ, ແລະ ສາທາລະນະລັດໂດມິນິກັນ. ໄລຍະຕໍ່ມາ, ສະຫະພັນກຳມະບານທີ່ສະຫນັບສະຫນູນສະມາຄົມ AMUSSOL ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2005 ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງປະກັນສັງຄົມສຳລັບແຮງງານປະກອບອາຊີບອິດສະຫຼະ ແລະ ແຮງງານປະເພດອື່ນໆທີ່ມີຄວາມສ່ຽງ. AMUSSOL ເຮັດຫນ້າທີ່ເປັນສື່ກາງລະຫວ່າງສະຖາບັນປະກັນສັງຄົມ ແລະ ຜູ້ອອກແຮງງານໃນເສດຖະກິດນອກລະບົບດ້ວຍການລວບລວມເງິນສົມທົບປະກັນສັງຄົມຈາກສະມາຊິກຂອງຕົນ ແລະ ໂອນໃຫ້ສະຖາບັນປະກັນສັງຄົມ. AMUSSOL ໄດ້ຄຸ້ມຄອງແຮງງານ 60,000 ຄົນຈົນເຖິງປະຈຸບັນ. ຄວາມຈິງທີ່ວ່າຜູ້ອອກແຮງງານພ້ອມທີ່ຈະຈ່າຍຄ່າທຳນຽມເພີ່ມ 1% ສຳລັບຄ່າໃຊ້ຈ່າຍໃນການດຳເນີນງານ AMUSSOL ນອກຈາກເງິນສົມທົບສະແດງໃຫ້ເຫັນວ່າພວກເຂົາເຫັນຄວາມສຳຄັນຂອງປະກັນສັງຄົມຫຼາຍ.




ບົດສະຫຼຸບຫຍໍ້ຂອງອົງການແຮງງານສາກົນແມ່ນສ່ວນໜຶ່ງຂອງຜົນການສຶກສາດ້ານປະລິມານຂອງກຳລັງແຮງງານ ແລະ ໂຄງສ້າງດ້ານວິສາຫະກິດໃນ ສປປ ລາວ ເພື່ອເຂົ້າໃຈເລິກເຊິ່ງກ່ຽວກັບພາບລວມຂອງແຮງງານນອກລະບົບເພື່ອນຳມາສູ່ການອອກແບບນະໂຍບາຍປະກັນສັງຄົມ. ການສຶກສາຄັ້ງນີ້ແມ່ນໄດ້ຮັບທຶນສະໜັບສະໜູນຈາກໂຄງການຮ່ວມມືຂອງອົງການແຮງງານສາກົນ ແລະ ສ. ເກົາຫຼີ ແລະ ດຳເນີນການສຶກສາໂດຍສະຖາບັນຄົ້ນຄ້ວາດ້ານການຄຸ້ມຄອງນະໂຍບາຍອ໋ອດສຟອດ.

ໂດຍການຮ່ວມມືກັບ

ລາຍລະອຽດການຕິດຕໍ່

**ສຳນັກງານອົງການແຮງງານສາກົນສຳລັບພາກພື້ນອາຊີ ແລະ ປາຊີຟິກ**

ຕຶກສະຫະປະຊາຊາດ, ຖະໜົນລາດສະດຳເນີນນອກ, ບາງກອກ 10200,
ຣາຊະອານາຈັກໄທ

ນາງ ເລີບລົມ ເດ — ຜູ້ຈັດການໂຄງການ
ທ. ທອງເຫຼັກ ຊິງ — ຜູ້ປະສານງານໂຄງການ
ນ. ນຸດທອງ ອາລຸນທອງ — ຜູ້ປະສານງານໂຄງການ

ໂທລະສັບ: +66 2288 1234
ແຟັກ: +66 2280 1735
ອີເມວ: BANGKOK@ilo.org

ອີເມວ: del@ilo.org
ອີເມວ: thongleck@ilo.org
ອີເມວ: alounthong@ilo.org

© ອົງການແຮງງານສາກົນ 2023